# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 16 ມັງກອນ 2022 (16-1-2022)

---

## ສະແວງຫາຄວາມຍຸຕິທັມໃນໂລກທີ່ບໍ່ຍຸຕິທັມ

*ຜູ້ໃດແດ່ເປັນວິລະຊົນທີ່ເຮົາຊື່ນຊົມຍ້ອນການຢືນສູ້ເພື່ອຄວາມຍຸຕິທັມຂອງເຂົາ?*

**ຈຸດສຳຄັນໃນບົດຮຽນ**: ຮ່ວມກັບພຣະເຈົ້າໃນການຕາມຫາຄວາມຍຸຕິທັມໃນສະພາບການເມີນເສີຍແລະການກົດຂີ່.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ມັນເປັນເດືອນ ເມສາ 1963 ໃນ ເບີມິງແຮມ, ຣັດອາລາບາມາ ຈັດວ່າເປັນເມືອງທີ່ມີການແບ່ງແຍກທີ່ສຸດໃນອາເມຣິກາ ຍ້ອນການທາລຸນທີ່ໂຫດຫ້ຽມຕໍ່ຄົນອາຟຣິກັນ-ອາເມຣິກັນ. Dr. Martin Luther King Jr. ດຣ. ມາຕິນ ລູເຕີ ຄິງ ຈູເນັຍ ແລະກອງປະຊຸມຜູ້ນຳຄຣິສຕຽນພາກໃຕ້ໄດ້ດຳເນີນການກັບຣັຖບານທ້ອງຖິ່ນເພື່ອແກ້ໄຂບັນຫາເຫຼົ່ານີ້ແຕ່ບໍ່ເປັນຜົນ. ຫຼັງຈາກການວາງແຜນເປັນເວລາຫຼາຍເດືອນ, ເຂົາເລີ່ມມີການປະທ້ວງຢ່າງສັນຕິຕໍ່ຄວາມອຸກອັ່ງຫຼາຍຂອງບັນດາສິດຍາພິບານຄົນຂາວໃນເຂດທີ່ມີຜູ້ວິພາກວິຈານ ດຣ. ຄິງ ແລະ ຕໍ່ວ່າເພິ່ນວ່າມີທ່າທີໃນທາງ "ບໍ່ຮອບຄອບແລະບໍ່ມີກາລະເທສະ." ດຣ. ຄິງ ໄດ້ຕອບດ້ວຍຈົດໝາຍຂອງເພິ່ນຈາກຄຸກເບີມິງແຮມແຫ່ງນຶ່ງ. ເພິ່ນໄດ້ທ້າທາຍຢ່າງກ້າຫານຕໍ່ຄວາມບໍ່ເຊື່ອຖື, ຄວາມບໍ່ສົນໃຈ, ແລະການຮັກສາສະຖານະຕົວເອງ (self-preservation) ຂອງບັນດາຜູ້ນຳຄຣິສຕະຈັກ. ເພິ່ນໄດ້ເຕືອນເຂົາວ່າບໍ່ມີໃຜອາສັຍຢູ່ໃນຟອງນ້ຳ: "ຄວາມບໍ່ຍຸຕິທັມໃນທີ່ຕ່າງໆແມ່ນການຄຸກຄາມຕໍ່ຄວາມຍຸຕິທັມໃນທຸກຫົນທຸກແຫ່ງ."

ບັນຫານີ້ບໍ່ແມ່ນສິ່ງໃໝ່; ຄວາມບາບນີ້ໄດ້ລະບາດຖ້ວມກາງມະນຸດມາໄດ້ຫຼາຍສະຕະວັດແລ້ວ. ຄວາມຈິງ, ສິ່ງເຫຼົ່ານີ້ແມ່ນໃຈກາງຂອງຫົວຂໍ້ທີ່ຜູ້ທຳນວາຍໂອບາດີຢາໄດ້ກ່າວໃນບົດເທສນາແກ່ຊົນຊາດເອໂດມ. ຄຳເທສນາຂອງທ່ານໂອບາດີຢາເປັນການເຈັບປວດ, ແຕ່ມັນມີການນຳໃຊ້ອັນຫາສິ່ງປຽບບໍ່ໄດ້ສຳລັບເຮົາໃນເວລານີ້.

**ພຣະຄັມພີກ່າວວ່າແນວໃດ :** (ເບິ່ງຕາມຂໍ້ 1, 2, ແລະ 3, )

### ການສຶກສາພຣະຄັມພີ

### 1. <u>ໂອບາດີຢາ 1-4</u>.

*1 ນີ້ຄືນິມິດຂອງໂອບາດີຢາ: ອັນນີ້ແມ່ນສິ່ງທີ່ອົງພຣະຜູ້ເປັນເຈົ້າໄດ້ກ່າວກ່ຽວກັບເອໂດມ-ພວກເຮົາໄດ້ຍິນຂໍ້ຄວາມຈາກພຣະຜູ້ເປັນເຈົ້າ; ມີທູດຄົນນຶ່ງໄດ້ຖືກສົ່ງໄປໃນບັນດາປະຊາຊາດເພື່ອກ່າວວ່າ, "ຈົ່ງລຸກຂຶ້ນແລະໃຫ້ພວກເຮົາໄປເຮັດເສິກຕໍ່ສູ້ເອໂດມ"*
*2 ເບິ່ງແມ ເຮົາຈະເຮັດໃຫ້ເຈົ້າເປັນພວກນ້ອຍໃນບັນດາປະຊາຊາດ; ເຈົ້າຈະຖືກດູຖູກຢ່າງໜັກ 3 ຈິດໃຈຈອງຫອງຂອງພວກ*
*ເຈົ້າໄດ້ຫລອກລວງພວກເຈົ້າເອງ ເຈົ້າຜູ້ຊຶ່ງອາສັຍຢູ່ໃນຮອຍແຕກຂອງໂງ່ນຫີນທີ່ສູງ, ເຈົ້າຄິດຢູ່ໃນໃຈວ່າ "ໃຜຈະດຶງຂ້ອຍລົງ*
*ສູ່ພື້ນດິນໄດ້?" 4 ພຣະຜູ້ເປັນເຈົ້າຊົງກ່າວວ່າ "ຖ້າເຈົ້າບິນເຫີນຂຶ້ນໄປສູງເໝືອນນົກອິນຊີ ແລະຖ້າເຈົ້າເຮັດຮັງຂອງເຈົ້າໄດ້ໃນ-*
*ຖ້າມກາງບັນດາດວງດາວທັງຫຼາຍ, ເຮົາຈະເອົາເຈົ້າລົງມາຈາກບ່ອນນັ້ນ."*

ເພື່ອກຳນົດຂັ້ນຕອນສຳລັບການສຶກສານີ້, ພວກເຮົາຕ້ອງໄດ້ກັບຄືນໄປຫາປະຖົມການ, ຫາຄວາມສັມພັນຣະຫວ່າງສອງອ້າຍນ້ອງ: ຢາໂຄບແລະເອຊາວ. ຄວາມສັມພັນຂອງເຂົາເບິ່ງຄືວ່າຂັດແຍ່ງກັນສເມີ. ພວກເຮົາໄດ້ເຫັນການຂັດແຍ່ງກັນເມື່ອເອຊາວໄດ້ຂາຍສິດອ້າຍກົກໃຫ້ຢາໂຄບໃນຣາຄາແກງຖົ່ວຍນຶ່ງ (ປຖກ 25:27-34). ຫຼາຍປີຕໍ່ມາ, ສອງອ້າຍນ້ອງເບິ່ງຄືວ່າໄດ້ປອງດອງກັນແລ້ວ (ປຖກ 33:1-20). ແຕ່ເປັນທີ່ແຈ່ມແຈ້ງວ່າເຂົາຍັງບໍ່ໄດ້ຮັກກັນ ແລະບໍ່ເຄີຍຕໍ່ສູ້ເພື່ອຄວາມດີຂອງຄົນອື່ນຢ່າງຈິງຈັງ. ການປະທະກັນຍັງສືບຕໍ່ຣະຫວ່າງຄອບຄົວຂອງພວກເຂົາ.

ເຊື້ອສາຍຂອງຢາໂຄບໄດ້ກາຍມາເປັນຊົນຊາດອິສຣາເອນ (ຊຶ່ງໄດ້ແບ່ງອອກເປັນສອງອານາຈັກ: ອິສຣາເອນແລະຢູດາ). ເຊື້ອສາຍຂອງເອຊາວໄດ້ກາຍມາເປັນຊົນຊາດເອໂດມ. ຕລອດເວລາໃນປວັດສາດຂອງຊົນຊາດຢູດາແລະເອໂດມ, ພວກເຂົາຕ່າງກໍຕໍ່ສູ້ເພື່ອຜົນປໂຍດແລະຮັກສາອຳນາດຂອງຕົນໄວ້. ເຂົາເປັນປະເທດເພື່ອນບ້ານກັນ ຊຶ່ງຕ້ອງການຊຶ່ງກັນແລະກັນ, ແຕ່ສ່ວນຫຼາຍເຂົາກຽດຊັງກັນ. ໃນສະຕະວັດທີຫົກກ່ອນ ຄ.ສ, ພາຍຫຼັງທີ່ຢູດາຖືກແຊກແຊງຈາກຊົນຊາດອື່ນ, ຜູ້ທຳນວາຍໂອບາດີຢາໄດ້ຢູ່ໃນເຫດການນັ້ນ, ໄດ້ຂຽນຄຳພິພາກສາອັນໃຫຍ່ຫຼວງຕໍ່ສູ້ເອໂດມ.

ນຶ່ງໃນອົງປະກອບສຳຄັນທີ່ນຳໄປສູ່ການຕົກຕ່ຳຂອງເອໂດມແມ່ນຄວາມຈອງຫອງຂອງພວກເຂົາ. ຊາວເອໂດມຄຶດວ່າເຂົາປອດພັຍແລ້ວ. ເຂົາຄິດວ່າເຂົາໄດ້ຮັບການປົກປ້ອງຢ່າງດີ. ແຕ່ພຣະເຈົ້າປະກາດວ່າພຣະອົງຈະເຮັດໃຫ້ເຂົາບໍ່ມີຄວາມສຳຄັນຫຍັງ ເພາະໃຈຈອງຫອງຂອງເຂົາໄດ້ຫຼອກລວງເຂົາເອງ. ພວກເຂົາຢູ່ເທິງພູສູງ ຄືວ່າຢູ່ຫ່າງໄກຈາກພັຍອັນຕະລາຍທຸກຢ່າງທີ່ຢູ່ອ້ອມຮອບເຂົາ.

*ຄວາມບໍ່ຍຸຕິທັມປະເພດໃດແດ່ທີ່ຖືກລະເລີຍຢ່າງໃຫຍ່ໃນປະເພນີຂອງເຮົາ?*

ຄວາມຈອງຫອງຂອງເຂົາໄດ້ນຳເຂົາໄປສູ່ຄວາມບາບໃນການຮັກສາສະຖານະຕົວເອງຊຶ່ງພຣະເຈົ້າໄດ້ຕັດສິນລົງໂທດ. ຢ່າສັບສົນໃນທີ່ນີ້, ບັນຫາບໍ່ແມ່ນສິ່ງທີ່ເອໂດມມີຢູ່. ບັນຫາແມ່ນການຄອບຄອງຂອງເຂົາ. ພວກເຮົາລ້ວນແຕ່ມີສິ່ງທີ່ເຮົາບໍ່ໄດ້ຮັບຫຼືບໍ່ຄູ່ຄວນ. ຄວາມບາບໃນການທີ່ພວກເຮົາຄອບຄອງຢ່າງໃດໃນສິ່ງທີ່ເຮົາໄດ້ຖວາຍ ອາດຕົກໄປໃນສາມກໍຣະນີ: <u>ບາບຂອງການລະເວັ້ນ, ບາບຂອງການລົງມືທຳ, ແລະບາບຂອງການຮັກສາສະຖານະຕົວເອງ.</u>

ເອໂດມຖືກຕັດສິນລົງໂທດໂດຍສະເພາະແມ່ນຍ້ອນການດື້ດ້ານບໍ່ເຊື່ອຟັງແລະການຮັກສາສະຖານະຕົວເອງຂອງເຂົາ. ພວກເຮົາໄດ້ເຫັນຄວາມດື້ດ້ານຂອງເຂົາພາໃຫ້ເຂົາຈອງຫອງ, ຊຶ່ງເຮັດໃຫ້ເຂົາຕາບອດແນມບໍ່ເຫັນຕົວເອງ ດັ່ງທີ່ພຣະເຈົ້າເຫັນເຂົາ. ມັນເຮັດໃຫ້ເຂົາບອດຕໍ່ຄວາມຍຸຕິທັມອ້ອມຮອບເຂົາ. ມັນເຮັດໃຫ້ເຂົາບອດຕໍ່ຄວາມບໍຣິສຸດຂອງພຣະເຈົ້າແລະຍັບຍັ້ງເຂົາຈາກຄວາມຢຳເກງພຣະເຈົ້າ.

ພຣະພອນແລະສິ່ງດີທີ່ເຮົາປະສົບມາສາມາດມີຜົນກະທົບດັ່ງດຽວກັນ. ມັນສາມາດນຳເຮົາໃຫ້ຄຶດວ່າເຮົາແຂງແຮງກວ່າ, ສລາດກວ່າ, ແລະຄູ່ຄວນກັບຂອງປະທານອັນດີກວ່າຄົນອ້ອມຂ້າງເຮົາ. ຄວາມຈອງຫອງນັ້ນສາມາດເຮັດໃຫ້ເຮົາບອດບໍ່ສາມາດແນມເຫັນຄົນອ້ອມຮອບເຮົາເໝືອນດັ່ງພຣະເຈົ້າເຫັນເຂົາ.

**2. <u>ໂອບາດີຢາ 10-14</u>.**

*[10]ຍ້ອນເຈົ້າໄດ້ເຮັດທາລຸນແກ່ຢາໂຄບນ້ອງຊາຍຂອງເຈົ້າ ຄວາມອັບອາຍຈະຄຸມເຈົ້າໄວ້ ແລະເຈົ້າຈະຕ້ອງຖືກຕັດຂາດອອກ*
*ໄປເປັນນິດ [11]ໃນມື້ທີ່ເຈົ້າຢືນເປັນສັດຕູ, ໃນຂນະທີ່ຄົນຕ່າງດ້າວເອົາຊັບສິນຂອງເມືອງໄປແລະຄົນຕ່າງຊາດເຂົ້າມາທາງປະ*
*ຕູເມືອງ ພວກເຂົາຈັບສລາກຢູ່ເທິງເມືອງເຢຣູຊາເລັມ ພວກເຈົ້າກໍໄດ້ເຮັດເໝືອນກັບຄົນເຫຼົ່ານັ້ນ. [12]ແຕ່ເຈົ້າບໍ່ຄວນຍິ້ມພໍໃຈທີ່*
*ໄດ້ເບິ່ງມື້ນັ້ນ ຄືມື້ທີ່ນ້ອງຊາຍຂອງເຈົ້າໄດ້ຮັບເຄາະຮ້າຍ ແລະ ບໍ່ສົມຄວນທີ່ຈະປິຕິຍິນດີຍ້ອນລູກຫຼານຢູດາ ໃນເມື່ອພວກເຂົາ*
*ຖືກທຳລາຍໃຫ້ຈິບຫາຍ ເຈົ້າບໍ່ຄວນຈະເວົ້າໂອ້ອວດໃນມື້ທີ່ພວກເຂົາຕົກທຸກໄດ້ຍາກ [13]ເຈົ້າບໍ່ຄວນຜ່ານເຂົ້າປະຕູເມືອງແຫ່ງ*
*ປະຊາຊົນຂອງເຮົາໃນມື້ທີ່ພວກເຂົາຖືກທຳລາຍ ພວກເຈົ້າບໍ່ຄວນຢືນຍິ້ມເບິ່ງຄວາມທຸກຍາກຂອງພວກເຂົາໃນມື້ທີ່ພວກເຂົາຖືກ*
*ເຄາະຮ້າຍ ພວກເຈົ້າບໍ່ຄວນຍື່ນມືຈັບເອົາຊັບສິນຂອງພວກເຂົາໃນມື້ທີ່ພວກເຂົາຖືກເຫດຮ້າຍອັນຕະລາຍ [14]ເຈົ້າບໍ່ຄວນຢືນຢູ່*
*ທາງແຍກຂອງພວກເຂົາ ເພື່ອຈະດັກຈັບພວກເຂົາທີ່ຫຼົບໜີ, ເຈົ້າບໍ່ຄວນມອບຜູ້ທີ່ລອດພົ້ນມາໄດ້ນັ້ນ ໃຫ້ແກ່ສັດຕູຂອງພວກ*
*ເຂົາໃນມື້ທີ່ພວກເຂົາຕົກທຸກໄດ້ຍາກ.*

ນອກຈາກຄວາມບາບຄວາມຈອງຫອງແລ້ວ, ເອໂດມຍັງໄດ້ປະເຊີນກັບການຟ້ອງຄັ້ງທີ່ສອງອີກຄື: ເຂົາໄດ້ທໍຣະຍົດຕໍ່ຢູ

ດາ. ການກ່າວຫານີ້ອາດຈະແປກໃຈເພາະວ່າເປັນການທໍຣະຍົດຕໍ່ເນື່ອງ-ແຕ່ ໂອບາດີຢາບັລຍາຍວ່າເປັນຄວາມຮຸນແຮງ. ເອໂດມໄດ້ເຮັດຫຍັງ? ປະຊາຊົນພຽງຢືນຢູ່ຊື່ໆ. ເອໂດມອາດບໍ່ແມ່ນຜູ້ແຊກແຊງຢູດາ, ແຕ່ເຂົາໄດ້ສວຍໂອກາດໃນເຣື່ອງທີ່ເກີດຂຶ້ນກັບຢູດາ ແລະມີຜົນໄດ້ຈາກສິ່ງນັ້ນ. ຄວາມເມີນເສີຍຂອງເຂົາຖືກບັລຍາຍວ່າເປັນຄວາມຮຸນແຮງ. ຮຸນແຮງ!

ບັນຫາການເມີນເສີຍຕໍ່ຄວາມບໍ່ຍຸຕິທັມຊຶ່ງພຣະເຈົ້າຕັດສິນລົງໂທດໃນຢູດານີ້ ແມ່ນບັນຫາດຽວກັນກັບ ດຣ. ຄິງຂຽນໃນ *ຈົດໝາຍຂອງເພິ່ນຈາກຄຸກເບີມິງແຮມແຫ່ງນຶ່ງວ່າ: "ພວກເຮົາຕ້ອງໄດ້ກັບໃຈໃນຄົນລຸ້ນນີ້ບໍ່ແມ່ນຍ້ອນຄໍາເວົ້າທີ່ກຽດຊັງແລະການກະທໍາຂອງຄົນຊົ່ວໂດຍສະເພາະ, ແຕ່ຍ້ອນ<u>ຄວາມມິດງຽບທີ່ໜ້າຢ້ານຂອງເຫຼົ່າຄົນດີ.</u>"*

ການເມີນເສີຍຢ່າງແຮງແລະການດື້ດ້ານບໍ່ຟັງຄວາມໄດ້ຣະບາດໃນຄຣິສຕຽນອາເມຣິກັນເວລາມີບັນຫາກ່ຽວກັບເຊື້ອຊາດ. ໂດຍປົກຕິແລ້ວ ຄຣິສຕຽນປະພຶດຕົນເໝືອນຊາວເອໂດມ ຫຼາຍກວ່າປະພຶດຕົນເໝືອນພຣະຄຣິດ. ບາບຂອງການເມີນເສີຍບໍ່ໄດ້ທໍາລາຍຫຼາຍກວ່າຫຼືໜ້ອຍກວ່າບາບຂອງການລົງມືທໍາເລີຍ. ຄວາມດື້ດ້ານບໍ່ເຊື່ອຟັງແມ່ນການກະບົດຕົວຈິງ. ການເມີນເສີຍແມ່ນຄວາມຮຸນແຮງ. ການຊົ່ວຮ້າຍແລະການເມີນເສີຍຂອງເອໂດມ ໃນການຜ່າຍແພ້ຂອງຢູດາໄດ້ຖືກຕັດສິນລົງໂທດຄືກັນກັບເຂົາໄດ້ທໍາລາຍປະຕູເມືອງແລະຂ້າຄົນຂ້າງໃນ. ພຣະເຈົ້າບໍ່ໄດ້ທໍາລາຍເອໂດມ ຍ້ອນເຂົາໄດ້ແຊກແຊງອິສຣາເອນຫຼືລັກລອບເອົາດິນແດນ. ພຣະເຈົ້າທໍາລາຍເອໂດມຍ້ອນວ່າ ເຂົາບໍ່ໄດ້ເຮັດຫຍັງເພື່ອຢຸດມັນ. ຍ້ອນເຂົາບໍ່ໄດ້ສົນໃຈ. ການພິພາກສາຂອງພຣະເຈົ້າບໍ່ໄດ້ປ່ຽນໄປ. ຂ້າພະເຈົ້າຮູ້ສຶກເປັນຫ່ວງຢ່າງເລິກເຊິ່ງນໍາຄຣິສຕະຈັກສມັຍນີ້. ມີຈັກຄັ້ງທີ່ພວກເຮົານັ່ງເສີຍໃນຂນະທີ່ເພື່ອນບ້ານຂອງເຮົາເດືອດຮ້ອນ? ມີຈັກຄັ້ງທີ່ພວກເຮົາເລືອກການເມີນເສີຍເພື່ອຫຼີກເວັ້ນຄວາມບໍ່ສະດວກໃນການຈັດການກັບຄວາມບໍ່ຊອບທັມອ້ອມຮອບເຮົາ? ມີຈັກຄັ້ງທີ່ພວກເຮົາຕັດສິນໃຈໂດຍອີງໃສ່ການຮັກສາສະຖານະຂອງຕົນເອງແທນທີ່ຈະໃຫ້ແຜ່ນດິນຂອງພຣະເຈົ້າເຕີບໃຫຍ່. ຄວາມບາບນີ້ໜັກໜ່ວງຫຼາຍ. ມັນຕ້ອງແລກດ້ວຍຊີວິດເພື່ອນບ້ານຂອງເຮົາ. ມັນຕ້ອງແລກດ້ວຍຄວາມສັມພັນຂອງເຮົາເອງກັບພຣະເຈົ້າແລະກັບຄົນອື່ນ. ແລະພວກມັນນໍາສູ່ຄວາມຫາຍຍະນະ.

*ມີອຸປສັກຫຍັງແດ່ເພື່ອເອົາຊະນະຄວາມບໍ່ຍຸຕິທັມໃນຮີດຄອງປະເພນີຂອງເຮົາ?*

## 3. <u>ໂອບາດີຢາ 15-17</u>.

*[5]ເພາະວ່າວັນຂອງພຣະຜູ້ເປັນເຈົ້າສໍາລັບພວກຕ່າງຊາດໄດ້ໃກ້ເຂົ້າມາແລ້ວ ຖ້າເຈົ້າຈະເຮັດສິ່ງໃດແກ່ພວກເຂົາ ເຈົ້າກໍຈະຖືກການນັ້ນ ລາງວັນແຫ່ງການຕອບແທນຂອງເຈົ້າ ຈະກັບມາຕົກໃສ່ເທິງຫົວຂອງເຈົ້າເອງ [16]ເຫດວ່າພວກເຈົ້າໄດ້ດື່ມຢູ່ເທິງພູເຂົາບໍຣິສຸດຂອງເຮົາຢ່າງໃດ ພວກຕ່າງຊາດທັງປວງກໍຈະດື່ມຢ່າງນັ້ນໂດຍບໍ່ຢຸດເຊົາ ຈະດື່ມສືບໄປ ພວກເຂົາຈະດື່ມແລະກືນແລ້ວພວກເຂົາຈະເປັນເໝືອນກັບທີ່ບໍ່ເຄີຍເປັນມາກ່ອນ [17]ແລະຢູ່ເທິງພູເຂົາຊີໂອນຈະມີຄວາມພົ້ນ ພູນັ້ນຈະບໍຣິສຸດ ແລະຄອບຄົວຂອງຢາໂຄບຈະໄດ້ຮັບທີ່ດິນນັ້ນເປັນກັມສິດຂອງພວກເຂົາ.*

ໂອບາດີຢາໄດ້ປະກາດວ່າການພິພາກສາຂອງພຣະເຈົ້າກໍາລັງມາຫາເອໂດມ. ແຕ່ ພວກເຮົາກໍໄດ້ເຫັນການປ່ຽນໃນກິຣິຍາ (verb)ແລະກາລ(tense)ທີ່ນີ້, ແລະ ຕົວຊີ້ບອກວ່າການພັງທະລາຍຂອງເອໂດມຖືກນໍາໃຊ້ເປັນພາບພົດຂອງຄົນທຸກຊາດທີ່ກະທໍາການໃນທາງນີ້. "ວັນຂອງອົງພຣະຜູ້ເປັນເຈົ້າກໍໃກ້ເຂົ້າມາແລ້ວ," ແລະ ອົງພຣະຜູ້ເປັນເຈົ້າຈະຊົງພິພາກສາ "ຄົນທຸກຊາດ" ທີ່ເຮັດຄືກັນກັບເອໂດມ. ແລະ ບໍ່ແມ່ນແຕ່ພຣະເຈົ້າຈະນໍາການພິພາກສາມາໃຫ້ເອໂດມເທົ່ານັ້ນ, ແຕ່ພຣະອົງຍັງຈະຟື້ນຟູຢູດາຂຶ້ນໃໝ່ເຊັ່ນກັນ.

ການພິພາກສາຂອງພຣະເຈົ້າບໍຣິສຸດແລະສົມບູນ. ມັນບໍ່ເໝືອນຊິງຊັ່ງ ດັ່ງທີ່ພວກເຮົາຊາວຕາເວັນຕົກໄດ້ຮັບການສິດສອນມາ. ຄວາມຍຸຕິທັມຕາມພຣະຄັມພີແມ່ນກ່ຽວກັບຄວາມສັມພັນອັນຖືກຕ້ອງເຊັ່ນ; ມັນກ່ຽວກັບການຟື້ນຟູບໍຣິສຸດ. ໃນຖານະເປັນເປັນລູກຂອງພຣະເຈົ້າ, ພວກເຮົາໄດ້ຮັບການຮຽກເອີ້ນໃຫ້ດໍາເນີນຊີວິດໃນການສ້າງຄວາມປອງດອງ; ພວກເຮົາຕ້ອງເຮັດສິ່ງທີ່

ຖືກຕ້ອງແລະສະແດງຄວາມຮັກອັນໝັ້ນຄົງແລະໃຊ້ຊີວິດໃນຄວາມສາມັກຄີທັມກັບພຣະເຈົ້າຂອງທ່ານ" (ມີກາ 6:8). ພວກເຮົາຕ້ອງຕໍ່ສູ້ກັບການເມີນເສີຍທີ່ມາຈາກການຮັກສາຄວາມສະດວກຂອງເຮົາເອງ ຫຼື ຈາກການໃຊ້ຜົນປໂຍດທີ່ເຮົາໄດ້ຮັບໃນສັງຄົມເພື່ອຮັກສາສະຖານະຂອງເຮົາເອງໄວ້. ແທນທີ່ຈະເຮັດແນວນັ້ນ, ພວກເຮົາຄວນຕັ້ງໃຈສນັບສນູນເພື່ອເພື່ອນບ້ານຂອງເຮົາ, ລວມທັງເດັກທີ່ບໍ່ທັນເກີດມາ. ການຕໍ່ສູ້ກັບການເມີນເສີຍທີ່ມາຈາກການຮັກສາຄວາມສະດວກສະບາຍ ແລະສະຖານະຂອງເຮົາມີ ຜົນດີຕໍ່ແນວທາງການສນັບສນູນເພື່ອເພື່ອນບ້ານຂອງເຮົາ.

*ເມື່ອໃດທ່ານເຫັນພຣະເຈົ້າເຮັດຄວາມຍຸຕິທັມຂອງພຣະອົງແທນພວກທີ່ຖືກກົດຂີ່ຂົ່ມເຫັງ?*

ແມ່ນ, ພຣະເຈົ້າຈະຕໍ່ສູ້ເພື່ອຜູ້ທີ່ຖືກຂົ່ມເຫັງ. ພຣະອົງຈະນຳເອົາຄວາມຍຸຕິທັມມາສູ່ທຸກຄົນ. ແຕ່ ທ່ານແລະຂ້າພະເຈົ້າຕ້ອງມີສ່ວນສະແດງບົດບາດນີ້ເໝືອນກັນ. ພວກເຮົາເປັນທູດອານາຈັກຂອງພຣະເຈົ້າ. ມັນເປັນໜ້າທີ່, ຄວາມຮັບຜິດຊອບ,ແລະເປັນກຽດອັນສູງສົ່ງໃນການປະກາດຣາຊອານາຈັກຂອງພຣະເຈົ້າຂອງເຮົາໃນໂລກນີ້. ອານາຈັກຂອງພຣະເຈົ້າບໍ່ສາມາດຂຍາຍໂດຍຜ່ານຄວາມເມີນເສີຍ. ພວກເຮົາຈະບໍ່ຍູ້ຄວາມມືດຄືນມາແລະແກ້ໄຂຄວາມຍຸຕິທັມໃນຊຸມຊົນຂອງເຮົາໂດຍການປ່ອຍໃຫ້ເວລາຜ່ານໄປຢ່າງບໍ່ຢຸດຢັ້ງ ໃນຂນະທີ່ພວກເຮົາຍິນດີກັບສິດພິເສດຂອງເຮົາ. ພວກເຮົາຕ້ອງໃຊ້ສິ່ງທີ່ພຣະເຈົ້າປະທານໃຫ້ເພື່ອອານາຈັກຂອງພຣະອົງ. <u>ພວກເຮົາຕ້ອງເພື່ອແຜ່ຄວາມຮັກບໍຣິສຸດແກ່ເພື່ອນບ້ານຂອງເຮົາ ຕັ້ງແຕ່ທ້ອງແມ່ຮອດຫຼຸມຝັງສົບ (from the womb to the tomb).</u>

*ມີທາງໃດແດ່ທີ່ກຸ່ມຂອງເຮົາສາມາດເຮັດເພື່ອເອົາຊະນະຄວາມບໍ່ຍຸຕິທັມໃນຊຸມຊົນຂອງເຮົາ?*

## ນຳໃຊ້ໃນຊີວິດ

ຈົ່ງຮ່ວມມືກັບພຣະເຈົ້າເພື່ອສແວງຫາຄວາມຍຸຕິທັມໃນສະພາວະຄວາມເມີນເສີຍແລະການກົດຂີ່ຂົ່ມເຫັງ. ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ໄປນີ້:

➢ **ຈົ່ງຍ້າຍຈາກການຮັກສາສະຖານະຂອງຕົວເອງສູ່ການເສັຽສລະ.** ຈົ່ງຄົ້ນເບິ່ງບ່ອນນຶ່ງໃນຊີວິດຂອງທ່ານບ່ອນທີ່ທ່ານປະຕິບັດການຮັກສາສະຖານະຂອງຕົນເອງແທນທີ່ຈະສແວງຫາຣາຊອານາຈັກຂອງພຣະເຈົ້າກ່ອນ. ຈົ່ງປະເມີນການໃຊ້ເວລາ,ພອນສວັນ, ແລະຊັບສົມບັດຂອງທ່ານແລະເລືອກເອົາບ່ອນນຶ່ງເພື່ອປະຕິບັດການປ່ຽນແປງ ເພື່ອທ່ານຈະໄດ້ສແວງຫາຣາຊອານາຈັກຂອງພຣະເຈົ້າກ່ອນ ແລະໃຊ້ຊີວິດໃນການເສັຽສລະ.

➢ **ຈົ່ງຍ້າຍຈາກການບໍ່ຫົວຊາສູ່ຄວາມເຫັນອົກເຫັນໃຈ.** ຈົ່ງໃຊ້ເວລາເພື່ອບັນທຶກແລະຂຽນຄຳຕອບຕໍ່ຄຳຖາມຕໍ່ໄປນີ້. ຂ້າພະເຈົ້າສູ້ຊົນກັບຄວາມເມີນເສີຍຢ່າງໃດ? ຂ້າພະເຈົ້າເຄີຍດື້ດ້ານບໍ່ຟັງຄວາມຢ່າງໃດ? ມີບ່ອນໃດໃນຊີວິດຂອງຂ້າພະເຈົ້າທີ່ຂ້າພະເຈົ້າດຳເນີນຊີວິດໃນການຮັກສາສະຖານະຂອງຕົນເອງ ແທນທີ່ການຮັບໃຊ້ຢ່າງເສັຽສລະ?

➢ **ຈົ່ງຍ້າຍຈາກຄວາມເມີນເສີຍສູ່ການປະຕິບັດ.** ບາງບ່ອນໃນຊຸມຊົນຂອງທ່ານທີ່ມີຄວາມບໍ່ສເມີພາບ. ກຳນົດພື້ນທີ່ທີ່ເຫັນໄດ້ຊັດເຈນແລະນຳເອົາສອງຄົນເພື່ອວາງແຜນການຕໍ່ສູ້ເພື່ອຄວາມຍຸຕິທັມໃນຂົງເຂດນັ້ນ. ຈົ່ງໃຫ້ແນ່ໃຈວ່າຈະນຳເອົາຄົນອື່ນທີ່ແຕກຕ່າງຈາກທ່ານໄປນຳແລະສາມາດສເນີມຸມມອງອື່ນໆກ່ຽວກັບວິທີການມີສ່ວນຮ່ວມ.

ມີຫຼາຍຄົນໃນພວກເຮົາອາດຈະໄດ້ຮັບພອນທີ່ເຮົາໄດ້ຮັບ ໃນຂນະທີ່ເຂົາບໍ່ໄດ້ສົນໃຈນຳຄົນທີ່ຢູ່ອ້ອມຮອບເຮົາ. ຂໍໃຫ້ເຮົາທ້າທາຍເພື່ອນຳເອົາຄວາມຍຸຕິທັມໄປສູ່ເຂດທີ່ຂາດແຄນນັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ https://ulsb.org/sunday-school-2/ ແປໂດຍ PSI**